**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເລກທີ 0913 /ອຄ.ຄພກ
ນະຄອນຫຼວງວຽງຈັນ, ວັນທີ 01 ຕຸລາ 2021

# ແຈ້ງການ

**ເຖິງ:** - ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ທ່ານຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນໄລຍະວັນທີ 01-15 ຕຸລາ 2021 ສະບັບເລກທີ 1260/ຫສນຍ, ລົງວັນທີ 30 ກັນຍາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ເຜີຍແຜ່ ແລະ ເພີ່ມທະວີການປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນໄລຍະວັນທີ 01-15 ຕຸລາ 2021 ສະບັບເລກທີ 1260/ຫສນຍ, ລົງວັນທີ 30 ກັນຍາ 2021 ແລະ ແຈ້ງການທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

2. ປິດໂຮງງານທີ່ມີຜູ້ຕິດເຊື້ອໃນໂຮງງານ ເພື່ອໃຫ້ຄະນະສະເພາະກິດດຳເນີນການຄວບຄຸມ, ກວດສອບ ແລະ ປະເມີນຄວາມສ່ຽງ. ພາຍຫຼັງຜ່ານການກວດສອບ ແລະ ປະເມີນແລ້ວ ຈຶ່ງສະເໜີຕໍ່ຄະນະສະເພາະກິດ ຂັ້ນສູນກາງ ຫຼື ແຂວງ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາອະນຸຍາດເປີດຄືນ.

3. ປິດໂຮງງານທີ່ຢູ່ໃນເຂດແດງ, ຍົກເວັ້ນ ໂຮງງານຜະລິດສິນຄ້າບໍລິໂພກ, ຢາປົວພະຍາດ, ອຸປະກອນການແພດ, ເຄື່ອງປ້ອງກັນການລະບາດ ແລະ ໂຮງງານທີ່ນຳໃຊ້ພະນັກງານ-ກຳມະກອນ ຢູ່ຫໍພັກພາຍໃນໂຮງງານເທົ່ານັ້ນ ແລະ ຕ້ອງປະຕິບັດຕາມມາດຕະການປ້ອງກັນທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

ສຳລັບໂຮງງານປະເພດອື່ນໆ ທີ່ຢູ່ໃນເຂດແດງ ທີ່ຈະດຳເນີນກິດຈະການຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ໂດຍມີເງື່ອນໄຂໃຫ້ນຳໃຊ້ພະນັກງານ-ກຳມະກອນຢູ່ຫໍພັກພາຍໃນໂຮງງານເທົ່ານັ້ນ ແລະ ຕ້ອງປະຕິບັດຕາມມາດຕະການປ້ອງກັນທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

4. ເປີດໂຮງງານທີ່ບໍ່ຢູ່ໃນເຂດແດງ ແຕ່ຕ້ອງປະຕິບັດຕາມມາດຕະການ ທີ່ຄະນະສະເພາະກິດຂັ້ນສູນກາງ ຫຼື ແຂວງ, ນະຄອນຫຼວງວຽງຈັນ ວາງອອກຢ່າງເຂັ້ມງວດ. ຫ້າມນຳໃຊ້ພະນັກງານ-ກຳມະກອນ ທີ່ມາຈາກເຂດແດງເດັດຂາດ. ສຳລັບໂຮງງານທີ່ມີເງື່ອນໄຂ ກໍໃຫ້ຈັດສັນສະຖານທີ່ພັກຢູ່ກັບທີ່ໃຫ້ພະນັກງານ-ກຳມະກອນຂອງຕົນ ເພື່ອຫຼຸດຜ່ອນຄວາມສ່ຽງໃນການແຜ່ເຊື້ອຢູ່ໃນໂຮງງານ.

5. ທຸກໂຮງງານຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດວາງອອກ ດັ່ງນີ້:

5.1 ສ້າງແຜນມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ປະຕິບັດໃຫ້ຖືກຕ້ອງ ຄົບຖ້ວນ ແລະ ປະເມີນສະຖານທີ່ເຮັດວຽກຂອງໂຮງງານໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການ ສະບັບເລກທີ 0906/ອຄ.ຄພກ, ລົງວັນທີ 29 ກັນຍາ 2021 ແລ້ວດຳເນີນດັ່ງນີ້:

5.1.1 ໂຮງງານທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ຕາມ ຂໍ້ 3 ສະເໜີຄະນະສະເພາະກິດ ແຂວງ, ນະຄອນຫຼວງວຽງຈັນ ຮັບຮອງເອົາ;

5.1.2 ໂຮງງານທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ຕາມ ຂໍ້ 4 ຮັບຮອງດ້ວຍຕົນເອງ ແລ້ວ ດຳເນີນກິດຈະການໄດ້.

5.2 ພະນັກງານ-ກຳມະກອນທຸກຄົນ ຕ້ອງໄດ້ຮັບວັກຊີນຢ່າງໜ້ອຍໜຶ່ງເຂັມ ຈິ່ງອະນຸຍາດໃຫ້ເຮັດວຽກໃນໂຮງງານໄດ້;

5.3 ກວດວັດແທກອຸນຫະພູມ, ກໍລະນີພົບຜູ້ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ຽວຂອງໂຮງງານ ຫຼື ມີຜູ້ຕິດເຊື້ອ ໃຫ້ແຈ້ງຄະນະສະເພາະກິດ ຫຼື ສາຍດ່ວນ 165, 166 ແລະລາຍງານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເພື່ອດຳເນີນການກວດສອບ ແລະ ແນະນຳ;

5.4 ປະຕິບັດມາດຕະການຮັກສາໄລຍະຫ່າງຂອງການເຮັດວຽກ ເພື່ອຫຼຸດຄວາມແອອັດຢູ່ໃນສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ຫໍພັກ ໂດຍຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ;

5.5 ໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈຳນວນຫຼາຍ;

5.6 ຈັດໃຫ້ມີນໍ້າດື່ມສະອາດ, ບ່ອນລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈວລ້າງມືໃຫ້ພຽງພໍ ແລະ ຖືກຕາມຫຼັກການອະນາໄມ;

5.7 ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

5.8 ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວ ຫຼື ກິດຈະກຳອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອທຸກຮູບແບບ.

6. ໂຮງງານທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດວາງອອກ ຕ້ອງຢຸດເຊົາການດຳເນີນ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

7. ໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້.

8. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ (ຜ່ານເບີວັອດແອັບ: 020 9222 1234) ພາຍໃນວັນທີ 13 ຕຸລາ 2021 ເພື່ອສືບຕໍ່ລາຍງານກະຊວງ ແລະ ລັດຖະບານ ພິຈາລະນາຄົ້ນຄວ້າແຜນສືບຕໍ່ມາດຕະການທີ່ຈຳເປັນໃຫ້ທັນເວລາ.

9. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດ**

ສົມຈິດ ອິນທະມິດ